ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງປ້ອງກັນຄວາມສະຫງົບ
ອົງການໄອຍະການປະຊາຊົນສູງສຸດ
ສານປະຊາຊົນສູງສຸດ ເລກທີ 186 /ປກສ, ສປສ, ອອປສ

ນະຄອນຫຼວງວຽງຈັນ, ວັນທີ 27 ມັງກອນ 2020

# ຄໍາແນະນໍາຮ່ວມ

**ລະຫວ່າງ:**

**ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ ກ່ຽວກັບ ການດໍາເນີນຄະດີ ການກະກຽມ ໃຫ້ແກ່ການກະທໍາຜິດ ແລະ ຄວາມພະຍາຍາມ ກໍ່ການກະທໍາຜິດ ໃນສະຖານການຄ້າມະນຸດ**

**ເຖິງ:** ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕໍາຫຼວດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ທົ່ວປະເທດ.

**ເລື່ອງ:** ການດໍາເນີນຄະດີ ຂັ້ນກະກຽມ ໃຫ້ແກ່ການກະທໍາຜິດ ແລະຄວາມພະຍາຍາມ ກໍ່ການກະທໍາຜິດ ໃນສະຖານຄ້າມະນຸດ.

- ອີງຕາມ ມາດຕາ 215 ວັກ 7 ຂອງປະມວນກົດໝາຍອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017;
- ອີງຕາມ ມາດຕາ 89 ວັກ 4 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 022/ສພຊ, ລົງວັນທີ 17 ທັນວາ 2015;

- ອີງຕາມ ການຕົກລົງເຫັນດີເປັນເອກະພາບຂອງກອງປະຊຸມ 3 ພາກສ່ວນ ກ່ຽວກັບ ການຄົ້ນຄວ້າການກະທຳຜິດສະຖານການຄ້າມະນຸດໃນການກະກຽມ ແລະ ຄວາມພະຍາຍາມ, ຄັ້ງວັນທີ 15 ມັງກອນ 2019.

ໃນໄລຍະຜ່ານມາ ການດຳເນີນຄະດີ ຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ໄດ້ຈັດຕັ້ງປະຕິບັດຕາມກົດໝາຍ ໃນການດຳເນີນຄະດີ ກ່ຽວກັບການຄ້າມະ ນຸດໄດ້ເປັນຢ່າງດີ ແຕ່ຍັງມີຂອດການດຳເນີນຄະດີບາງຈຸດ ມີຊ່ອງຫວ່າງໃນການຈັດຕັ້ງປະຕິບັດເປັນຕົ້ນການກຳນົດການກະທຳຜິດສະຖານການຄ້າມະນຸດ ໃນການກະກຽມໃຫ້ແກ່ການກະທຳຜິດ, ຄວາມພະຍາຍາມກໍ່ການກະທຳຜິດ ແລະ ການກະທຳສຳເລັດແມ່ນຍັງບໍ່ທັນ ລະອຽດ, ຈະແຈ້ງ ແລະ ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ. ສະນັ້ນ, ເພື່ອເປັນບ່ອນອີງ ແລະ ຮັບປະກັນຄວາມເປັນເອກະພາບ ໃນການດຳເນີນຄະດີ ໃຫ້ມີຄວາມຖືກຕ້ອງຄົບຖ້ວນ, ຮອບດ້ານ, ພາວະວິໄສ ແລະ ຍຸຕິທຳ.

**ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ**
**ແລະ ສານປະຊາຊົນສູງສຸດ ອອກຄຳແນະນຳຮ່ວມ:**

**ມາດຕາ 1 ຈຸດປະສົງ**

ການສ້າງຄຳແນະນຳຮ່ວມສະບັບນີ້ ເພື່ອຈັດຕັ້ງປະຕິບັດ ມາດຕາ 215 (ວັກ 7) ຂອງປະມວນກົດໝາຍອາຍາ ສະບັບເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017 ແລະ ມາດຕາ 89 (ວັກ 4) ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ສະບັບເລກທີ 022/ສພຊ, ລົງວັນທີ 17 ທັນວາ 2015 ທີ່ໄດ້ກຳນົດເນື້ອໃນ ຂັ້ນກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ໃນສະຖານ

ການຄ້າມະນຸດກໍ່ຈະຖືກລົງໂທດ ແນໃສ່ເພື່ອສ້າງຄວາມເປັນເອກະພາບ ໃນການດຳເນີນຄະດີ ຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ໃນຂອບເຂດທົ່ວປະເທດ ກ່ຽວກັບການດຳເນີນຄະດີໃນສະຖານຄ້າມະນຸດ.

**ມາດຕາ 2 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນສະຖານການຄ້າມະນຸດ**

ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນສະຖານການຄ້າມະນຸດ ມີພຶດຕິກຳ ດັ່ງນີ້:

1. ການໝັ້ນໝາຍ ຫຼື ການແຕ່ງດອງ ແອບແຝງ;
2. ການຂູດຮີດແຮງງານ;
3. ການຂູດຮີດທາງເພດ ແລະ ການບັງຄັບໃຫ້ເປັນໂສເພນີ;
4. ການເປັນຂ້າທາດ;
5. ການຄ້າປະເວນີຂອງຜູ້ອື່ນ;
6. ການໃຫ້ຖືພາ;
7. ການເອົາເດັກໄປລ້ຽງ ຫຼື ການເອົາເດັກເປັນລູກລ້ຽງ ແອບແຝງ;
8. ການເປັນຂໍທານ;
9. ການຖ່າຍຮູບພາບ, ສະແດງ, ເຜີຍແຜ່ ສິ່ງລາມົກ;
10. ການລັກພາຕົວ;
11. ການເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ.

**ມາດຕາ 3 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ໃນພຶດຕິກຳ ການໝັ້ນໝາຍ ຫຼື ການແຕ່ງດອງແອບແຝງ**

1. **ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກດ້ານການກະທຳ, ວິທີການ ແລະ ຈຸດປະສົງ** ດັ່ງນີ້:

1.1 **ການກະທຳ** ສະແດງອອກ ຄື:

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ຊັບສິນ, ເງິນ;
- ການກະກຽມເອກະສານແບບຟອມ ເຊັ່ນ: ເອກະສານ ການເດີນທາງ, ການໝັ້ນໝາຍ, ການແຕ່ງດອງ ແລະ ອື່ນໆ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.

1.2 **ວິທີການ** ສະແດງອອກ ຄື:

- ຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ;
- ເພື່ອໃຫ້ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ປະຕິບັດຕາມ ເຊັ່ນ: ເຂົ້າຫາເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ນຳໃຊ້ວິທີການອື່ນເພື່ອໝັ້ນໝາຍ ຫຼື ແຕ່ງດອງແອບແຝງ.

1.3 **ຈຸດປະສົງ** ສະແດງອອກ ຄື:

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

ນອກຈາກນີ້ ອາດຈະມີການກະທຳໃດໜຶ່ງ ດັ່ງນີ້:

- ມີຮູບພາບ, ຈ່າຍເງິນ ຫຼື ມີການປະກອບເອກະສານ, ສັນຍາ, ການສູ່ຂໍ, ໝັ້ນໝາຍ, ແຕ່ງດອງ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ມີການຮ່ວມປະເວນີ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ;
- ຍຶດເອກະສານ, ກັກຂັງ, ຈຳກັດທີ່ຢູ່ ຫຼື ການກະທຳອື່ນ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ບັງຄັບ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດປະຕິບັດຕາມ ເຊັ່ນ: ມີການສູ່ຂໍ ຫຼື ໝັ້ນໝາຍ ໂດຍບໍ່ຖືກຕ້ອງຕາມລະບຽບການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະເທດ ຫຼື ພົນລະເມືອງລາວດ້ວຍກັນ ຫຼື ນຳໃຊ້ວິທີການອື່ນເພື່ອໝັ້ນໝາຍ ຫຼື ແຕ່ງດອງ ແອບແຝງ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

3. **ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີຮູບພາບ, ຈ່າຍເງິນ ຫຼື ມີການປະກອບເອກະສານການສູ່ຂໍ, ໝັ້ນໝາຍ, ແຕ່ງດອງ ຫຼື ເອກະ ສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ມີການຮ່ວມປະເວນີ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ;
- ຍຶດເອກະສານ, ກັກຂັງ, ຈຳກັດທີ່ຢູ່ ຫຼື ການກະທຳອື່ນ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ບັງຄັບ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ປະຕິບັດຕາມ ເຊັ່ນ: ມີການສູ່ຂໍ ຫຼື ໝັ້ນໝາຍ ໂດຍບໍ່ຖືກຕ້ອງຕາມລະບຽບການແຕ່ງດອງ ລະຫວ່າງ ພົນລະເມືອງລາວ ກັບຄົນຕ່າງປະ ເທດ ຫຼື ພົນລະເມືອງລາວ ດ້ວຍກັນ ຫຼື ນຳໃຊ້ວິທີການອື່ນ ເພື່ອໝັ້ນໝາຍ ຫຼື ແຕ່ງດອງ ແອບແຝງ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການຂູດຮີດທາງເພດ.

ນອກຈາກນີ້ອາດຈະຖືກຂູດຮີດແຮງງານ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນທີ່ຂັດກັບກົດໝາຍ ແລະ ວັດທະນະທຳ ອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງຄວນເອົາໃຈໃສ່**

- ການກະທຳຜິດສະຖານການຄ້າມະນຸດໃນຂັ້ນກະກຽມ ແລະ ຄວາມພະຍາຍາມຜູ້ກະທຳຜິດ ແມ່ນໄດ້ ຜົນປະໂຫຍດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກເຄາະຮ້າຍ, ພໍ່, ແມ່, ຍາດພີ່ນ້ອງ ລວມທັງການປະກອບ ເອກະສານບໍ່ຖືກຕ້ອງ, ປອມແປງເອກະສານ ແລະ ເອກະສານບໍ່ຄົບຖ້ວນ.
- ການກຳນົດ ຂັ້ນກະກຽມ ແລະ ຄວາມພະຍາຍາມ ໃຫ້ເຂົ້າໃຈໂດຍລວມວ່າ: ເປົ້າໝາຍການແຕ່ງດອງແອບແຝງ ແມ່ນເພື່ອຈຸດປະສົງການຂູດຮີດທາງເພດ, ຂູດຮີດແຮງງານ ຫຼື ຈຸດປະສົງອື່ນ.
- ໃນບາງກໍລະນີ ກໍ່ອາດບໍ່ມີການສູ່ຂໍ, ໝັ້ນໝາຍ ຫຼື ແຕ່ງດອງ.
- ບັນດາຫຼັກຖານທີ່ສະແດງອອກ ໃນການກະທຳ ແລະ ວິທີການສ່ວນໃດສ່ວນໜຶ່ງ ທີ່ໄດ້ກ່າວມາຂ້າງເທິງ ແມ່ນຖືວ່າເປັນການຄ້າມະນຸດຂັ້ນກະກຽມ ຫຼື ຂັ້ນພະຍາຍາມ ໂດຍບໍ່ຈຳເປັນຕ້ອງມີການພິສູດຈຸດປະສົງ.
- ຄວາມພະຍາຍາມ: ໃຫ້ກຳນົດນັບແຕ່ມີການເຄື່ອນຍ້າຍ, ນຳສົ່ງ, ຂົນສົ່ງ ຈົນເຖິງສະຖານທີ່ຮັບເອົາຂອງຜູ້ວາງແຜນ (ຜູ້ເປັນຫົວໂປ່ໂຕການ) ໃນຂັ້ນຕອນນີ້ອາດຈະ ຍຶດເອກະສານ, ຖືກກັກຂັງ ແຕ່ຜູ້ຖືກເຄາະຮ້າຍຍັງບໍ່ທັນຖືກຂູດຮີດ, (ຖ້າໄດ້ຖືກຂູດຮີດແລ້ວ ຖືວ່າເປັນຂັ້ນສຳເລັດ);
- ໃນກໍລະນີ ມີການເຈລະຈາ ຮັບເງິນ ຫຼື ວາງເງິນມັດຈຳກ່ອນລ່ວງໜ້າແລ້ວ ສ່ວນໃດໜຶ່ງ ໂດຍມີການກະກຽມເອກະສານ ຫຼື

ບໍ່ມີ ກໍຕາມ, ບໍ່ທັນມີການສູ່ຂໍ ຫຼື ເຄື່ອນຍ້າຍ ແມ່ນໃຫ້ຖືວ່າ ເປັນການຄ້າມະນຸດ ໃນຂັ້ນພະຍາຍາມ;

- ຜູ້ເຄາະຮ້າຍ ຫຼື ຜູ້ຕົກເປັນເຍື່ອ ທີ່ຍັງບໍ່ທັນໄດ້ຮັບຄວາມເສຍຫາຍ ທາງດ້ານຮ່າງກາຍ ແລະ ຈິດ ໃຈ ແມ່ນຖືເປັນ ຂັ້ນພະຍາຍາມ.

**ຕົວຢ່າງ:**

- ນາງ ກໍ ຢູ່ບ້ານ ເມືອງວາ ເມືອງ ຜົ້ງສາລີ ແຂວງ ຜົ້ງສາລີ ຖືກບັງຄັບໃຫ້ແຕ່ງດອງ ກັບທ້າວ ອາ ຄົນຈີນ ແລ້ວໄປອາໄສຢູ່ນຳຜົວ ແຕ່ຖືກຈຳກັດທີ່ຢູ່, ຖືກກັກຂັງ ບໍ່ໃຫ້ໄປໄສ ຕໍ່ມາບັງຄັບໃຫ້ ນາງ ກໍ ໄປເປັນເມຍນ້ອຍຂອງຄົນອື່ນ;

- ນາງ ປໍ ຢູ່ບ້ານ ນາແລ ເມືອງ ເມິງ ແຂວງ ບໍ່ແກ້ວ ໄດ້ແຕ່ງດອງກັບທ້າວ ອູ ຄົນຈີນ ໂດຍຖືກຕ້ອງຕາມກົດໝາຍ ແລ້ວໄປອາໄສຢູ່ນຳຜົວ ຢູ່ຈີນ ຕໍ່ມາ ນາງ ປໍ ໄດ້ເກີດລູກ ແລ້ວທ້າວ ອູ ໄດ້ຂາຍນາງ ປໍ ໃຫ້ຄົນອື່ນໃຊ້ເໝືອນຄົນຂ້າທາດ;

- ນາງ ຍໍ ຢູ່ບ້ານ ຫ້ວຍລ່ອງໃໝ່ ເມືອງ ສິງ ແຂວງ ຫຼວງນ້ຳທາ ໄດ້ແຕ່ງດອງກັບ ທ້າວ ອີ ຄົນຈີນ ໂດຍຖືກຕ້ອງຕາມກົດໝາຍ ແລ້ວໄປອາໄສຢູ່ນຳຜົວ ຢູ່ຈີນ ຕໍ່ມານາງ ຍໍ ໄດ້ຖືກທ້າວ ອີ ບັງຄັບໃຫ້ ນາງ ຍໍ ຄ້າປະເວນີ.

**ມາດຕາ 4 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການຂູດຮີດແຮງງານ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງ ມືສື່ສານ, ເງິນ;

- ມີເອກະສານແບບຟອມ ເຊັ່ນ: ເອກະສານ ການເດີນທາງ, ສັນຍາແຮງງານ, ໃບສະໝັກງານ, ບັດອອກແຮງງານ ແລະ ອື່ນໆ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ, ຄົນໄກ້ຊິດ ຫຼື ອຳນາດການປົກຄອງ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ: ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດ ຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງ ມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ, ຄົນໄກ້ຊິດ ຫຼື ອຳນາດການປົກຄອງ;

- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ແລະ ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ໂດຍບໍ່ມີ

ເອກະສານອະນຸຍາດໄປອອກແຮງງານ ຫຼື ມີການປະກອບເອກະສານ ໄປອອກແຮງງານ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດ ຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສ ໃຫ້ກ່ອນລ່ວງໜ້າ, ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຄົນໃກ້ຊິດ ຫຼື ອຳນາດການປົກຄອງ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ໂດຍບໍ່ມີເອກະສານອະນຸຍາດໄປອອກແຮງງານ ຫຼື ມີການປະກອບເອກະສານໄປອອກແຮງງານ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ.

**3.2 ວິທີການ ສະແດງອອກ ຄື:**

- ຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສ ໃຫ້ກ່ອນລ່ວງໜ້າ ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

ນອກຈາກນີ້ ອາດຈະມີວິທີການໃດໜຶ່ງ ດັ່ງນີ້:

- ຍຶດເອກະສານ ການເດີນທາງ, ສັນຍາ ແຮງງານ ຫຼື ເອກະສານອື່ນທີ່ກ່ຽວຂ້ອງ
- ຍຶດເຄື່ອງມືສື່ສານ, ເງິນ, ຄຳ, ວັດຖຸມີຄ່າ ຫຼື ອື່ນໆ;
- ບັງຄັບໃຫ້ອອກແຮງງານ, ເຮັດວຽກເກີນແຮງງານ ຫຼື ເກີນເວລາໂດຍບໍ່ຈ່າຍຄ່າແຮງງານ ຫຼື ຈ່າຍບໍ່ຄົບຕາມການຕົກລົງ;
- ຫັກເງິນໃຊ້ຈ່າຍຕ່າງໆລ່ວງໜ້າ ໃຫ້ນາຍໜ້າ ຫຼື ຜູ້ໃຊ້ແຮງງານເກີນຄວາມຈິງ;
- ຖືກກັກຂັງ, ທຳຮ້າຍຮ່າງກາຍ, ຈຳກັດທີ່ຢູ່ ຫຼື ອື່ນໆ;
- ເຮັດວຽກຢູ່ສະຖານທີ່ເປັນອັນຕະລາຍຕໍ່ສຸຂະພາບ, ບໍ່ໄດ້ນຳໃຊ້ເຄື່ອງມືປ້ອງກັນຄວາມປອດໄພ ຕໍ່ຊີວິດ ແລະ ສຸຂະພາບ ຂອງການອອກແຮງງານ ຫຼື ເຮັດວຽກບໍ່ຖືກຕາມຈຸດປະສົງທີ່ຕົກລົງກັນ ຫຼື ນຳໃຊ້ວິທີການອື່ນ ເພື່ອບັງຄັບໃຫ້ອອກແຮງງານ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການຂູດຮີດແຮງງານ, ບັງຄັບໃຫ້ອອກແຮງງານ, ເປັນຂ້າທາດ.
- ນອກຈາກນີ້ ອາດຈະຖືກ ຂູດຮີດທາງ ເພດ ຫຼື ເອົາອະໄວຍະວະຕ່າງໆຂອງຮ່າງ ກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ

ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

4. **ສິ່ງທີ່ຄວນເອົາໃຈໃສ່**

- ການກະທຳຜິດສະຖານການຄ້າມະນຸດໃນຂັ້ນກະກຽມ ແລະ ຄວາມພະຍາຍາມຜູ້ກະທຳຜິດແມ່ນໄດ້ຜົນປະໂຫຍດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກເຄາະຮ້າຍ, ພໍ່, ແມ່, ຍາດພີ່ນ້ອງ ລວມທັງການປະ ກອບເອກະສານບໍ່ຖືກຕ້ອງ, ປອມແປງເອກະສານ ແລະ ເອກະສານບໍ່ຄົບຖ້ວນ.

- ນອກຈາກການກະທຳທີ່ໄດ້ກຳນົດໄວ້ໃນຄຳແນະນຳຮ່ວມແລ້ວໃນກໍລະນີທີ່ວາງຢາ ຫຼື ສີດຢາ ເພື່ອເຮັດໃຫ້ກາຍຍະພາບຜິດປົກກະຕິ ຫຼື ເປັນຄົນເຕ້ຍ, ການລ້ຽງລູກຄົນໃສ່ໃນໄຫ ເພື່ອບໍ່ໃຫ້ຂະຫຍາຍຕົວເຕັມສ່ວນ (ກໍລະນີນີ້ ແມ່ນໃຫ້ຖືວ່າ: ຕົກຢູ່ໃນວິທີການຂູດຮີດແຮງງານ).

- ບັນດາ ຫຼັກຖານທີ່ສະແດງອອກ ໃນການກະທຳ ແລະ ວິທີການສ່ວນໃດສ່ວນໜຶ່ງ ທີ່ໄດ້ກ່າວມາຂ້າງເທິງ ແມ່ນຖືວ່າເປັນການຄ້າມະນຸດຂັ້ນກະກຽມ ຫຼື ຂັ້ນພະຍາຍາມ ໂດຍບໍ່ຈຳເປັນຕ້ອງມີການພິສູດຈຸດປະສົງ.

## ມາດຕາ 5 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການຂູດຮີດທາງເພດ ແລະ ການບັງຄັບໃຫ້ເປັນໂສເພນີ

1. **ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

ນອກຈາກນີ້ ອາດຈະມີການກະກຽມເອກະສານແບບປອມ ເຊັ່ນ: ເອກະສານການເດີນທາງ, ການໄປອອກແຮງງານ ແລະ ອື່ນໆ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ໂດຍບໍ່ມີເອກະສານອະນຸຍາດໄປອອກແຮງງານ ຫຼື ມີການປະກອບເອກະສານໄປອອກ ແຮງງານ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ: ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສ ໃຫ້ກ່ອນລ່ວງໜ້າ, ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ໂດຍບໍ່ມີເອກະສານອະນຸຍາດໄປອອກແຮງງານ ຫຼື ມີການປະກອບເອກະສານໄປອອກແຮງງານ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະ

ໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສໃຫ້ກ່ອນລ່ວງໜ້າ, ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

ນອກຈາກນີ້ ອາດຈະມີວິທີການໃດໜຶ່ງ ດັ່ງນີ້:

- ຍຶດເອກະສານ ການເດີນທາງ ຫຼື ເອກະສານອື່ນ ທີ່ກ່ຽວຂ້ອງ;
- ເຄື່ອງມືສື່ສານ, ເງິນ, ຄຳ, ວັດຖຸມີຄ່າ ຫຼື ອື່ນໆ;
- ບັງຄັບ ໃຫ້ເປັນທາດທາງເພດ, ເປັນໂສເພນີ, ກະທຳສິ່ງລາມົກ ຫຼື ສະ ໜອງຄວາມຕ້ອງການທາງເພດດ້ວຍຮູບການອື່ນ;
- ຖືກກັກຂັງ, ທຳຮ້າຍຮ່າງກາຍ, ທຳຮ້າຍຈຸລັງ ແລະ ອະໄວຍະວະສືບພັນ, ຈຳກັດທີ່ຢູ່ ຫຼື ອື່ນໆ;
- ບັງຄັບໃຫ້ຮ່ວມເພດທຸກຮູບແບບ ຕາມຈຸດປະສົງຂອງຜູ້ຄ້າມະນຸດ;
- ຖືກແຈ້ງເປັນໜີ້ ໂດຍບໍ່ມີມູນຄວາມຈິງ ຫຼື ຖືກຂູດຮີດທາງເພດ ເພື່ອໃຊ້ແທນໜີ້ສິນ ຫຼື ນຳໃຊ້ວິທີການອື່ນໆ ເພື່ອຂູດຮີດທາງເພດ ແລະ ບັງຄັບໃຫ້ເປັນໂສເພນີ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການຂູດຮີດທາງເພດ ແລະ ບັງຄັບໃຫ້ເປັນໂສເພນີ;
- ນອກຈາກນີ້ ອາດຈະຖືກ ຂູດຮີດແຮງງານ, ເປັນຂ້າທາດ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍ ໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງທີ່ຄວນເອົາໃຈໃສ່**

- ການບັງຄັບໃຫ້ບໍລິການທາງເພດທຸກຮູບແບບ ຕາມຈຸດປະສົງຂອງຜູ້ຄ້າມະນຸດ, ແມ່ນໃຫ້ໝາຍເຖິງການບັງຄັບໃຫ້ຂາຍບໍລິການທາງເພດທຸກວິທີການ ຕາມຈຸດປະສົງຂອງການຄ້າມະນຸດ;

- ບັນດາຫຼັກຖານທີ່ສະແດງອອກ ໃນການກະທຳ ແລະ ວິທີການສ່ວນໃດສ່ວນໜຶ່ງ ທີ່ໄດ້ກ່າວມາຂ້າງເທິງ ແມ່ນຖືວ່າເປັນການຄ້າມະນຸດຂັ້ນກະກຽມ ຫຼື ຂັ້ນພະຍາຍາມໂດຍບໍ່ຈຳເປັນຕ້ອງມີການພິສູດຈຸດປະສົງ.

## ມາດຕາ 6 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການເປັນຂ້າທາດ

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ, ຄົນໃກ້ຊິດ ຫຼື ອຳນາດການປົກຄອງ.

ນອກຈາກນີ້ ອາດຈະມີການກະກຽມເອກະສານແບບຟອມ ເຊັ່ນ: ເອກະສານການເດີນທາງ, ສັນຍາແຮງງານ, ບັດອອກແຮງງານ, ໃບສະໝັກງານ ແລະ ອື່ນໆ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ,

ຄຳ ຫຼື ວັດຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍ ປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຄົນໃກ້ຊິດ ຫຼື ອຳນາດການປົກຄອງ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ຢູ່ພາຍໃນປະເທດ;
- ບໍ່ມີເອກະສານອະນຸຍາດອອກແຮງງານ ຫຼື ມີການປະກອບເອກະສານອອກແຮງງານ ຫຼື ເອກະ ສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສ ໃຫ້ກ່ອນລ່ວງໜ້າ, ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຄົນໃກ້ຊິດ ຫຼື ອຳນາດການປົກຄອງ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ ຄົນຢູ່ພາຍໃນ ຫຼື ຕ່າງປະເທດ ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ;
- ບໍ່ມີເອກະສານອະນຸຍາດໄປອອກແຮງງານ ຫຼື ມີການປະກອບເອກະສານໄປອອກແຮງງານ ຫຼື ເອກະສານອື່ນ ທີ່ບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ;
- ມີການກັກຂັງ ຫຼື ຈຳກັດທີ່ຢູ່.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ໃຫ້ຄຳໝັ້ນສັນຍາວ່າ ຈະໃຫ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ຫຼື ຈ່າຍເງິນຄ່າປະກອບເອກະສານຕ່າງໆ ຫຼື ຄ່າເດີນທາງ, ອາຫານ ແລະ ທີ່ພັກອາໄສ ໃຫ້ກ່ອນລ່ວງໜ້າ, ຜູກມັດດ້ວຍໜີ້ສິນ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

ນອກຈາກນີ້ ອາດຈະມີວິທີການໃດໜຶ່ງ ດັ່ງນີ້:

- ຍຶດເອກະສານ ການເດີນທາງ, ສັນຍາແຮງງານ ຫຼື ເອກະສານອື່ນ ທີ່ກ່ຽວຂ້ອງ;

- ຍຶດເຄື່ອງມືສື່ສານ, ເງິນ, ຄຳ, ວັດຖຸມີຄ່າ ຫຼື ອື່ນໆ;

- ບັງຄັບໃຫ້ອອກແຮງງານ, ນາບຂູ່, ທຳຮ້າຍຮ່າງກາຍ, ເຮັດວຽກເກີນແຮງງານ ຫຼື ເກີນເວລາ ໂດຍບໍ່ຈ່າຍຄ່າແຮງງານ ຫຼື ຈ່າຍບໍ່ຄົບຕາມການຕົກລົງ;

- ຫັກເງິນໃຊ້ຈ່າຍຕ່າງໆລ່ວງໜ້າໃຫ້ນາຍໜ້າ ຫຼື ຜູ້ໃຊ້ແຮງງານເກີນຄວາມຈິງ;

- ເຮັດວຽກຢູ່ສະຖານທີ່ເປັນອັນຕະລາຍ ຕໍ່ສຸຂະພາບ, ບໍ່ໄດ້ນຳໃຊ້ເຄື່ອງ ມືປ້ອງກັນຄວາມປອດໄພ ຕໍ່ຊີວິດ ແລະ ສຸຂະພາບ ຂອງການອອກແຮງງານ ຫຼື ເຮັດວຽກບໍ່ຖືກຕາມຈຸດປະສົງທີ່ຕົກລົງກັນ ຫຼື ນຳໃຊ້ວິທີການອື່ນໆ ເພື່ອບັງຄັບໃຫ້ອອກແຮງງານ.

**3. ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການເປັນຂ້າທາດ.

**ມາດຕາ 7 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການຄ້າປະເວນີຂອງຜູ້ອື່ນ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ເຄື່ອງມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນຫາ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.

**1.2 ວິທີການ ສະແດງອອກ ຄື:**

ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍຍິນຍອມ ຫຼື ສະໝັກໃຈ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ຈ່າຍຄ່າເດີນທາງ, ຈ່າຍຄ່າເອກະສານ,

ໃຫ້ຄຳໝັ້ນສັນຍາວ່າ: ຈະໄດ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນຫາ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ.

**2.2 ວິທີການ ສະແດງອອກ ຄື:**

ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍ ຍິນຍອມ ຫຼື ສະໝັກໃຈ ເຊັ່ນ: ສະເໜີບ່ອນເຮັດວຽກດີ, ຈ່າຍຄ່າເດີນທາງ, ຈ່າຍຄ່າເອກະສານ, ໃຫ້ຄຳໝັ້ນສັນຍາວ່າຈະໄດ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະ ທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ, ກຸ່ມຄົນ ຫຼື ນິຕິບຸກຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້ ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນຫາ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ ນ້ອງ ຫຼື ຄົນໃກ້ຊິດ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ຮັບເອົາຄົນ ຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບ ອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍຍິນຍອມ ຫຼື ສະໝັກໃຈ ໃຫ້ຄ້າປະເວນີ ເຊັ່ນ: ສະເໜີຜົນປະໂຫຍດຮ່ວມກັນ, ສະເໜີບ່ອນເຮັດວຽກດີ, ຈ່າຍຄ່າເດີນທາງ, ຈ່າຍຄ່າເອກະສານ, ໃຫ້ຄຳໝັ້ນສັນຍາວ່າ ຈະໄດ້ຄ່າຕອບແທນສູງ, ສະຫວັດດີການສັງຄົມດີ ຫຼື ການເອົາເງິນ, ຄຳ ຫຼື ວັດຖຸ ໃຫ້ກ່ອນລ່ວງໜ້າ ແລະ ອື່ນໆ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ຫຼື ນຳໃຊ້ວິທີການອື່ນໆເພື່ອຄ້າປະເວນີຜູ້ອື່ນ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການຄ້າປະເວນີຜູ້ອື່ນ.
- ນອກຈາກນີ້ ອາດຈະຖືກ ຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງທີ່ຄວນເອົາໃຈໃສ່**

- ການກະທຳຜິດສະຖານການຄ້າມະນຸດ ໃນຂັ້ນກະກຽມ ແລະ ຄວາມພະຍາຍາມຜູ້ກະທຳຜິດແມ່ນໄດ້ຜົນປະໂຫຍດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກເຄາະຮ້າຍ, ພໍ່, ແມ່, ຍາດພີ່ນ້ອງ ລວມທັງການປະ ກອບເອກະສານບໍ່ຖືກຕ້ອງ, ປອມແປງເອກະສານ ແລະ ເອກະສານບໍ່ຄົບຖ້ວນ;

- ຈຸດພິເສດແມ່ນ ຕ້ອງເຮັດໂດຍຜ່ານຂະບວນການ ຊອກຫາ, ມີການຂົນຂວາຍ, ຊື້ຈ້າງຈອບອອຍມີການວາງແຜນ ເຮັດເປັນຕ່ອງໂສ້ ເພື່ອຂົນຂວາຍໃຫ້ໄດ້ຄົນຈຳນວນຫຼາຍ ເຖິງຈະມີ ຫຼື ບໍ່ມີການຊູດຮີດກໍຕາມແມ່ນໃຫ້ຖືວ່າ: ຕົກຢູ່ໃນຂໍ້ຫາການຄ້າມະນຸດ (ຖ້າຫາກເຮັດເປັນບຸກຄົນດຽວ, ບໍ່ເປັນຂະບວນການ ແມ່ນຕົກຢູ່ໃນກໍລະນີອື່ນ);

- ມີການຊອກຫາ, ມີການຂົນຂວາຍ, ສະເໜີ, ແນະນຳ, ຊື້ຈ້າງ, ຈອບອອຍ, ບັງຄັບ ຫຼື ຜູກມັດດ້ວຍໜີ້ສິນ ຊຶ່ງເປັນການກະທຳ ທີ່ເຮັດດ້ວຍບຸກຄົນດຽວທີ່ບໍ່ເປັນຂະບວນການ ແຕ່ເປັນຈຸດປະສົງຂອງການຄ້າມະນຸດບຸກຄົນນັ້ນຈະຖືກຂໍ້ກ່າວຫາການຄ້າມະນຸດ;

- ສຳລັບການກະທຳຜິດຕໍ່ເດັກທີ່ມີອາຍຸຕ່ຳ 18 ປີ ພຽງແຕ່ມີ ການກະທຳ ແລະ ຈຸດປະສົງ ກໍຈະຖືວ່າເປັນການຄ້າມະນຸດ;

- ບັນດາຫຼັກຖານທີ່ສະແດງອອກ ໃນການກະທຳ ແລະ ວິທີການສ່ວນໃດສ່ວນໜຶ່ງ ທີ່ໄດ້ກ່າວມາຂ້າງເທິງ ແມ່ນຖືວ່າເປັນການຄ້າມະນຸດຂັ້ນກະກຽມ ຫຼື ຂັ້ນພະຍາຍາມ ໂດຍບໍ່ຈຳເປັນຕ້ອງມີການພິສູດຈຸດ ປະສົງ.

## ມາດຕາ 8 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ໃນພຶດຕິກຳ ການໃຫ້ຖືພາ

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໃນການເຮັດໃຫ້ຜູ້ອື່ນຖືພາ  ນ້ຳເຊື້ອ, ໄຂ່, ໂຕອ່ອນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

- ມີຕົວອ່ອນທີ່ປະຕິສົນທິແລ້ວ ແຕ່ຍັງບໍ່ທັນສິດເຂົ້າມົດລູກ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສະເໜີຜົນປະໂຫຍດ ເພື່ອໃຫ້ເປົ້າໝາຍຖືພາເຊັ່ນ: ເຂົ້າຫາ ເປົ້າໝາຍ, ກຸ່ມສ່ຽງທີ່ຈະມາຖືພາ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ເພື່ອສະເໜີໃຫ້ຖືພາທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໃນການເຮັດໃຫ້ ຜູ້ອື່ນຖືພາ, ນ້ຳເຊື້ອ, ໄຂ່, ໂຕອ່ອນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ;

- ມີຕົວອ່ອນທີ່ປະຕິສົນທິແລ້ວສົດເຂົ້າມົດລູກ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສະເໜີຜົນປະໂຫຍດ ເພື່ອໃຫ້ເປົ້າໝາຍຖືພາ ເຊັ່ນ: ເຂົ້າຫາ ເປົ້າໝາຍ, ກຸ່ມສ່ຽງທີ່ຈະມາຖືພາ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ເພື່ອໃຫ້ຖືພາທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໃນການເຮັດໃຫ້ຜູ້ອື່ນຖືພາ, ນ້ຳເຊື້ອ, ໄຂ່, ໂຕອ່ອນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີການເຄື່ອນຍ້າຍ, ຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ;
- ໃຫ້ຖືພາ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສະເໜີຜົນປະໂຫຍດ ເພື່ອໃຫ້ເປົ້າໝາຍຖືພາ ເຊັ່ນ: ເຂົ້າຫາເປົ້າໝາຍ, ກຸ່ມສ່ຽງທີ່ຈະມາຖືພາ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ

ເພື່ອໃຫ້ຖືພາທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຫຼື ນຳໃຊ້ວິທີການອື່ນ.

- ໃຫ້ຖືພາ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການໃຫ້ຖືພາ ເພື່ອເອົາໄປເປັນຂໍທານ, ຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງທີ່ຄວນເອົາໃຈໃສ່**

- ກຸ່ມສ່ຽງໃນກໍລະນີນີ້ໝາຍເຖິງ ບຸກຄົນ ຫຼື ກຸ່ມຄົນທີ່ຈະມາຖືພາ;
- ໂຕອ່ອນ ແມ່ນໃຫ້ໝາຍເຖິງ: ໂຕອ່ອນທີ່ໄດ້ມາຈາກຂະບວນການປະຕິສົນທິ ລະຫວ່າງ ນ້ຳອະສຸຈິ ແລະ ໄຂ່, ຊຶ່ງໂຕອ່ອນແມ່ນອາດຖືກຜະລິດຂຶ້ນ ຢູ່ສະຖານທີ່ພາຍໃນປະເທດ ຫຼື ນຳມາຈາກຕ່າງປະເທດ;
- ໃນກໍລະນີຜູ້ທີ່ຖືພາ ຫາກບໍ່ຮູ້ຈຸດປະສົງທີ່ແທ້ຈິງຂອງຜູ້ທີ່ມາຈ້າງໃຫ້ຖືພາ ວ່າຈະເອົາເດັກໄປເຮັດຫຍັງແທ້ ກໍໃຫ້ຖືວ່າຜູ້ຖືພາບໍ່ມີຄວາມຜິດ.

**ມາດຕາ 9 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການເອົາເດັກໄປລ້ຽງ ຫຼື ການເອົາເດັກເປັນລູກລ້ຽງແອບແຝງ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;
- ມີການປະກອບເອກະສານແບບຟອມ ການເອົາເດັກໄປລ້ຽງ ຫຼື ການເອົາເດັກເປັນລູກລ້ຽງແອບແຝງ ຫຼື ເອກະສານອື່ນໆ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ.

**1.2 ວິທີການ ສະແດງອອກ ຄື:**

ຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ ຫຼື ສະເໜີຜົນປະໂຫຍດ ເພື່ອໃຫ້ ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ປະຕິບັດຕາມ ເຊັ່ນ: ການເຂົ້າຫາເປົ້າໝາຍ ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ, ການສະເໜີຂໍເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;

- ມີການປະກອບເອກະສານແບບຟອມ ການເອົາເດັກໄປລ້ຽງ ຫຼື ການເອົາເດັກເປັນລູກລ້ຽງແອບແຝງ ຫຼື ເອກະສານອື່ນໆ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.

**2.2 ວິທີການ ສະແດງອອກ ຄື:**

- ຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ ຫຼື ສະເໜີຜົນປະໂຫຍດ ເພື່ອໃຫ້ ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ປະຕິບັດຕາມ ເຊັ່ນ: ການເຂົ້າ

ຫາເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ, ການສະເໜີຂໍເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ;

ນອກຈາກນີ້ ອາດຈະມີວິທີການໃດໜຶ່ງ ດັ່ງນີ້:

- ຈ່າຍຄ່າເກີດລູກ, ຄ່າລ້ຽງເດັກຜ່ານມາ ຫຼື ຄ່າສູ່ຂວັນອອກກໍາ;
- ມີການຮັບເອົາເດັກຈໍານວນຫຼາຍມາລ້ຽງ ເພື່ອຫາຜົນປະໂຫຍດໂດຍການສົ່ງຕໍ່ໃຫ້ໄປເປັນລູກລ້ຽງຄົນອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທໍາທີ່ສໍາເລັດ ໃນການກະທໍາຜິດ ສະແດງອອກ ດ້ານການກະທໍາ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທໍາ ສະແດງອອກ ຄື:**

- ການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;
- ມີການປະກອບເອກະສານແບບຟອມ ການເອົາເດັກໄປລ້ຽງ ຫຼື ການເອົາເດັກເປັນລູກລ້ຽງແອບແຝງ ຫຼື ເອກະສານອື່ນໆ;
- ການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນໍາ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ ຫຼື ສະເໜີຜົນປະໂຫຍດ ເພື່ອໃຫ້ ເປົ້າໝາຍ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ປະຕິບັດຕາມ ເຊັ່ນ: ການເຂົ້າຫາເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນ

ໃກ້ຊິດ, ການສະເໜີຂໍເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງ ແອບແຝງ;

- ເດັກຢູ່ໃນການຄຸ້ມຄອງ, ຖືກກັກຂັງ, ບັງຄັບ, ທຸບຕີ, ທໍລະມານ, ທຳຮ້າຍຮ່າງກາຍ ຫຼື ໃຫ້ເປັນຂໍທານ.

ນອກຈາກນີ້ ອາດຈະມີວິທີການໃດໜຶ່ງ ດັ່ງນີ້:

- ຈ່າຍຄ່າເກີດລູກ, ຄ່າລ້ຽງເດັກຜ່ານມາ ຫຼື ຄ່າສູ່ຂວັນອອກກຳ;

- ມີການຮັບເອົາເດັກຈຳນວນຫຼາຍ ມາລ້ຽງ ເພື່ອຫາຜົນປະໂຫຍດ ໂດຍການສົ່ງຕໍ່ໃຫ້ຄົນອື່ນ ເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງ ແອບແຝງ.

**3.3 ຈຸດປະສົງ ສະແດງອອກ ຄື:**

ຄ້າມະນຸດ ດ້ວຍການເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງ ແອບແຝງ ເພື່ອຂູດຮີດແຮງງານ ເປັນຂ້າທາດ, ຂູດຮີດທາງເພດ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**ມາດຕາ 10 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການເປັນຂໍທານ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ.

ນອກຈາກນີ້ອາດຈະມີການກະກຽມເອກະສານແບບຟອມເຊັ່ນ: ເອກະສານ ການເດີນທາງ, ການໄປອອກແຮງງານ ແລະ ອື່ນໆ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;
- ມີການປະກອບເອກະສານ;
- ມີການຊອກຫາ, ຊອກຮູ້, ລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ;
- ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ວາງຢາ ເຮັດໃຫ້ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອສະດວກໃນການເຄື່ອນຍ້າຍ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;
- ມີການປະກອບເອກະສານ;
- ມີການຊອກຫາ, ຊອກຮູ້, ການລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກ ຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີການກັກຂັງ, ຈຳກັດທີ່ຢູ່ ແລະ ອື່ນໆ;
- ມີການປະກອບອຸປະກອນການຂໍທານ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບ ອອຍ, ຍຸຍົງ, ສວຍໃຊ້ອຳນາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າ ໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ ຫຼື ນຳໃຊ້ວິທີການອື່ນ.
- ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ວາງຢາ ເຮັດໃຫ້ບໍ່ສາມາດ ຊ່ວຍເຫຼືອຕົນເອງໄດ້ ເພື່ອສະດວກໃນການເຄື່ອນຍ້າຍ ຫຼື ນຳໃຊ້ ວິທີການອື່ນ;
- ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ຕັດອະໄວຍະວະຕ່າງໆຂອງ ຮ່າງກາຍໃຫ້ ພິການ ຫຼື ນຳໃຊ້ວິທີການອື່ນ ເພື່ອໃຫ້ເປັນຂໍທານ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການໃຫ້ເປັນຂໍທານ.

ນອກຈາກນີ້ ອາດຈະຖືກ ຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງທີ່ຄວນເອົາໃຈໃສ່**

- ຄຳວ່າ ຕັດອະໄວຍະວະຂອງຮ່າງກາຍໃຫ້ພິການ ໝາຍເຖິງທຸກຮູບແບບການເຮັດໃຫ້ພິການ ເຊັ່ນ: ທຳລາຍ, ຈົກເອົາ ຫຼື ຕັດເອົາອະໄວຍະວະຂອງຮ່າງກາຍ ເພື່ອເຮັດໃຫ້ພິການ.

**ມາດຕາ 11 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;
- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່,ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ.

ນອກຈາກນີ້ ອາດຈະມີການກະກຽມເອກະສານແບບຟອມ ເຊັ່ນ: ເອກະສານການເດີນທາງ, ສັນ ຍາແຮງງານ ແລະ ອື່ນໆ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ຜູກມັດດ້ວຍໜີ້ສິນ, ສູ່ຂໍ, ໝັ້ນໝາຍ ຫຼື ແຕ່ງດອງແອບແຝງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື

ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;
- ມີການປະກອບເອກະສານ;
- ມີການຊອກຫາ, ຊອກຮູ້, ລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີການຜະລິດ ໜັງສື, ຖ່າຍຮູບພາບ, ຟິມວີດີໂອ, ວີຊີດີ, ດີວີດີ, ສະແດງສິ່ງລາມົກ ແລະ ສິ່ງອື່ນ ທີ່ລາມົກ ແຕ່ບໍ່ທັນໄດ້ເຜີຍແຜ່.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ, ຜູກມັດດ້ວຍໜີ້ສິນ, ສູ່ຂໍ, ໝັ້ນໝາຍ ຫຼື ແຕ່ງດອງ ແອບແຝງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ;
- ບັງຄັບ, ນາບຂູ່ ຫຼື ໃຊ້ກຳລັງ ເພື່ອໃຫ້ຖ່າຍຮູບ, ຖ່າຍວີດີໂອ, ສະແດງສິ່ງລາມົກ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;

- ມີການປະກອບເອກະສານ;

- ມີການຊອກຫາ, ຊອກຮູ້, ລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

- ມີການຜະລິດ ໜັງສື, ຖ່າຍຮູບພາບ, ຟີມວີດີໂອ, ວີຊີດີ, ດີວີດີ, ສະແດງສິ່ງລາມົກ ແລະ ສິ່ງອື່ນ ທີ່ລາມົກ;

- ມີການຈຳໜ່າຍ, ເຜີຍແຜ່, ສົ່ງອອກ ຫຼື ຂາຍ ໜັງສື, ຮູບພາບ, ຟີມວີດີໂອ, ວີຊີດີ, ດີວີດີ ການ ສະແດງສິ່ງລາມົກ ແລະ ສິ່ງອື່ນ ທີ່ລາມົກ.

**3.2 ວິທີການ ສະແດງອອກ ຄື:**

- ຂົ່ມຂູ່, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບ ອອຍ, ຍຸຍົງ, ສວຍໃຊ້ອຳນາດ, ຜູກມັດດ້ວຍໜີ້ສິນ, ສູ່ຂໍ, ໝັ້ນ ໝາຍ ຫຼື ແຕ່ງດອງ ແອບແຝງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ;

- ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ວາງຢາ ເພື່ອໃຫ້ຖ່າຍຮູບ, ຖ່າຍ ວີດີໂອ, ສະແດງສິ່ງລາມົກ;

- ຈຳໜ່າຍ, ເຜີຍແຜ່, ສົ່ງອອກ ຫຼື ຂາຍ ໜັງສື, ຮູບ, ຟີມວີດີໂອ, ວີຊີດີ, ດີວີດີ, ການສະແດງສິ່ງລາມົກ ຫຼື ສິ່ງອື່ນ ທີ່ລາມົກ ດ້ວຍ

ຕົນເອງ, ຜ່ານລູກຄ້າໂດຍກົງ, ຜ່ານສື່ອອນລາຍ ຫຼື ນໍາໃຊ້ວິທີການອື່ນ.

**3.3 ຈຸດປະສົງ ສະແດງອອກ ຄື:**

ຄ້າມະນຸດ ດ້ວຍການຖ່າຍຮູບພາບ, ສະແດງ, ເຜີຍແຜ່ສິ່ງລາມົກ. ນອກຈາກນີ້ ອາດຈະຖືກ ຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ບັງຄັບໃຫ້ເປັນໂສ ເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທໍາອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງຄວນເອົາໃຈໃສ່:**

- ການກະທໍາຜິດສະຖານການຄ້າມະນຸດໃນຂັ້ນກະກຽມ ແລະ ຄວາມພະຍາຍາມຜູ້ກະທໍາຜິດແມ່ນໄດ້ຜົນປະໂຫຍດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກເຄາະຮ້າຍ, ພໍ່, ແມ່, ຍາດພີ່ນ້ອງ ລວມທັງການປະກອບເອກະສານບໍ່ຖືກຕ້ອງ, ປອມແປງເອກະສານ ແລະ ເອກະສານບໍ່ຄົບຖ້ວນ;
- ຈຸດພິເສດ ຂອງກໍລະນີການຖ່າຍຮູບພາບສະແດງເຜີຍແຜ່ສິ່ງລາມົກ ຕ້ອງເຮັດໂດຍຜ່ານຂະບວນ ການຊອກຫາ, ມີການຂົນຂວາຍ, ຊື້ຈ້າງຈອບອອຍ, ມີການວາງແຜນເຮັດເປັນຕ່ອງໂສ້ ເຖິງຈະມີ ຫຼື ບໍ່ມີການຂູດຮີດກໍຕາມ ແມ່ນໃຫ້ຖືວ່າ ຕົກຢູ່ໃນຂໍ້ຫາ ການຄ້າມະນຸດ;
- ອະທິບາຍສັບ: ສັນຍາແຮງງານ ໃນກໍລະນີນີ້ ໝາຍເຖິງສັນຍາການໄປສະແດງລະຄອນ, ການເປັນດາລາ, ນັກຮ້ອງ ແລະ ອື່ນໆ;
- ເນື້ອໃນທັງໝົດທີ່ໄດ້ກ່າວມາຂ້າງເທິງ ແມ່ນໃຫ້ກວມເອົາທຸກເພດ, ທຸກໄວ.

**ມາດຕາ 12 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການລັກພາຕົວ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;

- ລັກພາຕົວ ດ້ວຍການ ຊຸກເຊື່ອງ, ປົກປິດຮ່າງກາຍ, ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ວາງຢາ ເຮັດໃຫ້ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອສະດວກໃນການເຄື່ອນຍ້າຍ, ລັກພາຕົວ ຫຼື ນຳໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທຳທີ່ສຳເລັດ ໃນການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ, ພາຫະນະ, ສະຖານທີ່, ອຸປະກອນຮັບໃຊ້, ເຄື່ອງມືສື່ ສານ, ເງິນ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ ຫຼື ຍຸຍົງ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ;

- ລັກພາຕົວດ້ວຍການ ຊຸກເຊື່ອງ, ປົກປິດຮ່າງກາຍ, ບັງຄັບ, ນາບຂູ່, ໃຊ້ກຳລັງ ຫຼື ວາງຢາ ເພື່ອສະດວກໃນການເຄື່ອນຍ້າຍ, ລັກພາຕົວ ຫຼື ນຳໃຊ້ວິທີການອື່ນ;

- ບັງຄັບ, ນາບຂູ່ ຫຼື ໃຊ້ກຳລັງ ເພື່ອຂູດຮີດແຮງງານ, ຂູດຮີດທາງເພດ, ເປັນຂ້າທາດ, ຄ້າປະເວນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນໆ.

**3.3 ຈຸດປະສົງ ສະແດງອອກ ຄື:**

ຄ້າມະນຸດ ເພື່ອຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ຄ້າປະເວນີ, ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງຄວນເອົາໃຈໃສ່**

- ການລັກພາຕົວ ເພື່ອຮຽກຄ່າໄຖ່ໃນກໍລະນີ ເປັນການລັກພາຕົວແບບ ລາຍບຸກຄົນ ແມ່ນບໍ່ໃຫ້ຕີຄວາມໝາຍເປັນການຄ້າມະນຸດ (ເຂົ້າໃນມາດຕາ 216 ຂອງປະມວນອາຍາ);

- ການລັກພາຕົວ ເພື່ອຮຽກຄ່າໄຖ່ ຫຼື ເພື່ອຈຸດປະສົງອື່ນ ໃນກໍລະນີ ການຄ້າມະນຸດ ແມ່ນເຮັດເປັນເຄືອຂ່າຍ, ຂະບວນການ, ແມ່ນໃຫ້ຖືວ່າ ເປັນການຄ້າມະນຸດ (215).

**ມາດຕາ 13 ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມ ກໍ່ການກະທຳຜິດ ໃນພຶດຕິກຳ ການເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ**

**1. ການກະກຽມ ໃຫ້ແກ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**1.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ ລວມທັງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໃນການຕັດອະໄວຍະວະ, ສະຖານທີ່, ພາຫະນະ, ອຸປະກອນຮັບໃຊ້, ເຄື່ອງມືຕັດອະໄວຍະວະ, ເຄື່ອງມືສື່ສານ, ເງິນ ແລະ ອື່ນໆ;

- ກະກຽມເອກະສານແບບຟອມ ເຊັ່ນ: ເອກະສານ ການເດີນທາງ, ສຸຂະພາບ, ການຜ່າຕັດ ແລະ ອື່ນໆ;

- ມີການຊອກຫາ, ຊອກຮູ້, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ.

**1.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ ຫຼື ນຳໃຊ້ວິທີການອື່ນ.

**1.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**2. ຄວາມພະຍາຍາມ ກໍ່ການກະທຳຜິດ ສະແດງອອກ ດ້ານການກະທຳ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**2.1 ການກະທຳ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ ລວມທັງ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໃນການຕັດອະໄວຍະວະ, ສະຖານທີ່, ພາຫະນະ, ອຸປະກອນຮັບໃຊ້, ເຄື່ອງມືຕັດອະໄວຍະວະ, ເຄື່ອງມືສື່ສານ, ເງິນ ແລະ ອື່ນໆ;

- ມີການຊອກຫາ, ຊອກຮູ້, ລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;

- ມີການປະກອບເອກະສານ ເຊັ່ນ: ເອກະສານ ການເດີນທາງ,ສຸຂະພາບ, ການຜ່າຕັດ ແລະ ອື່ນໆ;

- ມີການກັກຂັງ ຫຼື ຈຳກັດທີ່ຢູ່;

- ກຽມຕັດອະໄວຍະວະ.

**2.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນໍາ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອໍານາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາ ພໍ່, ແມ່, ຜູ້ປົກຄອງ, ຍາດພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດິການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ;
- ບັງຄັບ, ນາບຂູ່, ໃຊ້ກໍາລັງ ຫຼື ວາງຢາ ເຮັດໃຫ້ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອສະດວກໃນການເຄື່ອນຍ້າຍ, ຈະຕັດອະໄວຍະວະ ຫຼື ນໍາໃຊ້ວິທີການອື່ນ.

**2.3 ຈຸດປະສົງ ສະແດງອອກ ຄື:**

- ເພື່ອຫາຜົນປະໂຫຍດ ຫຼື ຄ້າມະນຸດ.

**3. ການກະທໍາທີ່ສໍາເລັດ ໃນການກະທໍາຜິດ ສະແດງອອກ ດ້ານການກະທໍາ, ວິທີການ ແລະ ຈຸດປະສົງ ດັ່ງນີ້:**

**3.1 ການກະທໍາ ສະແດງອອກ ຄື:**

- ມີການວາງແຜນ: ມີບຸກຄົນ ຫຼື ກຸ່ມຄົນ ລວມທັງຜູ້ ທີ່ມີຄວາມຊ່ຽວຊານ ຫຼື ຜູ້ຊໍານານງານ ໃນການຕັດອະໄວຍະວະ, ສະຖານທີ່, ພາຫະນະ, ອຸປະກອນຮັບໃຊ້, ເຄື່ອງມືຕັດອະໄວຍະວະ, ເຄື່ອງມືສື່ສານ, ເງິນ ແລະ ອື່ນໆ;
- ມີການຊອກຫາ, ຊອກຮູ້, ລັກພາຕົວ, ຕິດຕໍ່ພົວພັນ ເປົ້າໝາຍ, ກຸ່ມສ່ຽງ, ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ;
- ມີການປະກອບເອກະສານ ເຊັ່ນ: ເອກະສານ ການເດີນທາງ, ສຸຂະພາບ, ການຜ່າຕັດ ແລະ ອື່ນໆ;
- ມີການກັກຂັງ ຫຼື ຈໍາກັດທີ່ຢູ່;

- ຕັດອະໄວຍະວະ.

**3.2 ວິທີການ ສະແດງອອກ ຄື:**

- ຂົນຂວາຍ, ແນະນຳ, ຕົວະຍົວະ, ຫຼອກລວງ, ຊື້ຈ້າງ, ຈອບອອຍ, ຍຸຍົງ, ສວຍໃຊ້ອຳນາດ ຫຼື ຜູກມັດດ້ວຍໜີ້ສິນ ເພື່ອໃຫ້ເປົ້າໝາຍປະຕິບັດຕາມ ເຊັ່ນ: ເຂົ້າຫາ ພໍ່, ແມ່, ຜູ້ປົກຄອງ, ຍາດຕິພີ່ນ້ອງ ຫຼື ຄົນໃກ້ຊິດ ຫຼື ສະເໜີບ່ອນເຮັດວຽກ, ສະຫວັດດີການສັງຄົມ, ທີ່ພັກເຊົາດີ ແລະ ຄ່າຕອບແທນສູງ;

- ການ ບັງຄັບ, ນາບຂູ່, ໃຊ້ກຳລັງ, ວາງຢາ ຫຼື ນຳໃຊ້ວິທີການອື່ນ ເຮັດໃຫ້ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້ ເພື່ອຕັດອະໄວຍະວະຕ່າງໆ ຂອງຮ່າງກາຍ ຫຼື ນຳໃຊ້ວິທີການອື່ນ.

**3.3 ຈຸດປະສົງ ສະແດງອອກ ຄື:**

- ຄ້າມະນຸດ ດ້ວຍການເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ. ນອກຈາກນີ້ ອາດຈະຖືກໃຫ້ເປັນຂໍທານ, ຂູດຮີດແຮງງານ, ເປັນຂ້າທາດ, ຂູດຮີດທາງເພດ, ບັງ ຄັບໃຫ້ເປັນໂສເພນີ ແລະ ສິ່ງອື່ນ ທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

**4. ສິ່ງຄວນເອົາໃຈໃສ່:**

ການກະທຳຜິດສະຖານການຄ້າມະນຸດ ໃນການກະກຽມ ແລະ ຄວາມພະຍາຍາມຜູ້ກະທຳຜິດແມ່ນໄດ້ຜົນປະໂຫຍດ ແລະ ສ້າງຄວາມເສຍຫາຍໃຫ້ແກ່ຜູ້ຖືກເຄາະຮ້າຍ, ພໍ່, ແມ່, ຍາດພີ່ນ້ອງ ລວມທັງການປະກອບ ເອກະສານບໍ່ຖືກຕ້ອງ, ປອມແປງເອກະສານ ແລະ ເອກະສານບໍ່ຄົບຖ້ວນ;

- ຕ້ອງຈຳແນກຄວາມແຕກຕ່າງ ລະຫວ່າງ ມາດຕາ 214 ການຂາຍ ຫຼື ລັກເອົາອະໄວຍະວະ ຫຼື ເນື້ອເຫຍື່ອຂອງຄົນອື່ນ ແລະ ມາດຕາ 215 ການຄ້າມະນຸດກໍລະນີ ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ໃຫ້ເປັນການຄ້າມະນຸດ;

- ມາດຕາ 214 ຂອງປະມວນກົດໝາຍ, ວັກ 2 ເວົ້າເຖິງ ກໍລະນີການຜ່າຕັດ ແລ້ວລັກເອົາອະໄວຍະວະໄປພ້ອມ, ແລະ ໃນວັກ 3 ເຈົ້າກໍາ ແມ່ນໝາຍເຖິງ ຕ້ອງເປັນແພດຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ ແລະ ໃນກໍລະນີ ທັງສອງຝ່າຍຕົກລົງເຫັນດີໃນການຕັດອະໄວຍະວະ ແມ່ນຈະຕົກຢູ່ໃນມາດຕາ 214;

- ວິທີການຕົວຍົວະຫຼອກລວງ ກໍລະນີການຕັດອະໄວຍະວະ ແມ່ນໃຫ້ເຂົ້າໃຈວ່າ: ການຕົວະຍົວະນັ້ນກວມເອົາ 3 ເນື້ອໃນ ຄື ຕົວະໃຫ້ຫຼົງເຊື່ອ, ຕົວະຍົວະໃຫ້ເຫັນດີເຫັນພ້ອມ, ລັກລອບຕັດອະໄວຍະວະ;

- ບຸກຄົນ ຫຼື ກຸ່ມຄົນ ລວມທັງຜູ້ທີ່ມີຄວາມຊ່ຽວຊານ ຫຼື ຜູ້ຊໍານານງານ ໃນການຕັດອະໄວຍະວະ ແມ່ນໝາຍເຖິງ ບຸກຄົນທົ່ວໄປ ຫຼື ແພດໝໍ ຫຼື ຜູ້ທີ່ຊໍານານງານ;

- ສະຖານທີ່ຜ່າຕັດ ໝາຍເຖິງ ສະຖານທີ່ຜ່າຕັດສະເພາະ ຫຼື ສະຖານທີ່ອື່ນ;

- ກຽມຕັດເອົາອະໄວຍະ ໝາຍເຖິງຍັງບໍ່ທັນລົງມືຜ່າຕັດ ຊຶ່ງອາດຢູ່ໃນຂັ້ນຕອນການເຄື່ອນຍ້າຍ ຫຼື ການວາງຢາສະຫຼົບ ຫຼື ອື່ນໆ;

- ການວາງຢາ ໝາຍເຖິງ ການວາງຢາສະຫຼົບ, ຢານອນຫຼັບ, ຢາມຶນ;

- ວິທີການອື່ນ ແມ່ນອາດກວມເອົາເຖິງການມອມເຫຼົ້າ ຫຼື ເບຍ ຫຼື ສິ່ງມຶນເມົາອື່ນໆ.

ນອກຈາກ ກໍລະນີທີ່ໄດ້ກໍານົດໄວ້ໃນຄໍາແນະນໍາຮ່ວມນີ້ ແລ້ວອາດຈະມີກໍລະນີອື່ນໆ ທີ່ເກີດຂຶ້ນໃນຕໍ່ໜ້າ ແລະ ເປັນຂໍ້ຫຍຸ້ງຍາກໃນການດໍາເນີນຄະດີ, ສະນັ້ນ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ຕໍາຫຼວດ, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ຕ້ອງຄົ້ນຄວ້າປຶກສາຫາລືຮ່ວມກັນ ບົນພື້ນຖານຈຸດພິເສດທີ່ສະແດງອອກຄືກັນກັບ 11 ກໍລະນີ ໃນມາດຕາ 13 ຂອງຄໍາແນະນໍາຮ່ວມສະບັບນີ້ຕ້ອງດໍາເນີນຄະດີໃນສະຖານການຄ້າມະນຸດ.

## ມາດຕາ 14 ການຈັດຕັ້ງປະຕິບັດ

ມອບໃຫ້ ອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແຕ່ລະຂັ້ນ ຈັດຕັ້ງປະຕິບັດຄຳແນະນຳຮ່ວມສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

ຜ່ານການຈັດຕັ້ງປະຕິບັດ ຫາກມີບັນຫາຫຍຸ້ງຍາກບໍ່ສາມາດປະຕິບັດໄດ້ ຕ້ອງສົມທົບແກ້ໄຂດ້ວຍວິທີການປະຊຸມ, ປຶກສາຫາລືຮ່ວມກັນ ເພື່ອຄວາມເປັນເອກະພາບ ພ້ອມທັງສະຫຼຸບລາຍງານຄະນະນຳຂອງຕົນ ເພື່ອໃຫ້ທິດຊີ້ນຳ ເປັນແຕ່ລະໄລຍະ.

## ມາດຕາ 15 ຜົນສັກສິດ

ຄຳແນະນຳຮ່ວມສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

| | | |
|---|---|---|
| ລັດຖະມົນຕີ | ຫົວໜ້າ | ປະທານ |
| ກະຊວງປ້ອງກັນຄວາມສະຫງົບ | ອົງການໄອຍະການປະຊາຊົນສູງສຸດ | ສານປະຊາຊົນສູງສຸດ |
| ວິໄລ ຫຼ້າຄຳຟອງ | ຄຳສານ ສຸວົງ | ຄຳພາ ແສງດາຣາ |

# ການສົມທຽບ ຄວາມແຕກຕ່າງ ລະຫວ່າງການຄ້າມະນຸດ ກັບການກະທຳຜິດອື່ນ, ກົດໝາຍ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ

**ການສົມທຽບ ຄວາມແຕກຕ່າງ ລະຫວ່າງການຄ້າມະນຸດ ກັບການກະທຳຜິດອື່ນ, ກົດໝາຍ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.**

ຄູ່ມືນີ້ ຍົກໃຫ້ເຫັນການສົມທຽບລະຫວ່າງການຄ້າມະນຸດ ກັບການກະທຳຜິດອື່ນ, ກົດໝາຍ ແລະ ສົນທິສັນ ຍາ ທີ່ ສປປ ລາວ ເປັນພາຄີ ຊຶ່ງສະແດງອອກຕາມຕາຕະລາງ ດັ່ງນີ້:

| ສະຖານການກະທຳຜິດ | ການກະທຳ | ວິທີການ | ຈຸດປະສົງ |
|---|---|---|---|
| **ອົງປະກອບຂອງການຄ້າມະນຸດ (ມາດຕາ 1012 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ)** | - ການຊອກຫາ.<br>- ການລັກພາຕົວ.<br>- ການໃຫ້ສະຖານທີ່ພັກເຊົາ ຫຼື ລີ້ ຊ່ອນ.<br>- ການເຄື່ອນຍ້າຍ.<br>- ການຂົນສົ່ງ ຫຼື ນຳສົ່ງ, ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງ ປະເທດ ຫຼື ການກະທຳອື່ນທີ່ພົວພັນເຖິງການຄ້າມະນຸດ. | - ການຂົ່ມຂູ່<br>- ແນະນຳ<br>- ຕົວະຍົວະຫຼອກລວງ<br>- ຊື້ຈ້າງ, ຈອບອອຍ<br>- ຍຸຍົງ<br>- ສວຍໃຊ້ອຳນາດ<br>- ນາບຂູ່, ບັງຄັບ<br>- ຜູກມັດດ້ວຍໜີ້ສິນ<br>- ເອົາເດັກມາເປັນລູກລ້ຽງ<br>- ເອົາເດັກເປັນລູກລ້ຽງແອບແຝງ<br>- ໝັ້ນໝາຍແອບແຝງ<br>- ແຕ່ງດອງແອບແຝງ<br>- ໃຫ້ຖືພາ<br>- ໃຫ້ຂໍທານ<br>- ຖ່າຍຮູບພາບ,ໃຫ້ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ວິທີການອື່ນ | - ການຂູດຮີດແຮງງານ<br>- ຂູດຮີດທາງເພດ<br>- ຄ້າໂສເພນີ<br>- ບັງຄັບໃຫ້ເປັນໂສເພນີ<br>- ເອົາເປັນຂ້າທາດ<br>- ເອົາອະໄວຍະຕ່າງໆ ຂອງຮ່າງກາຍໄປຂາຍ ແລະສິ່ງອື່ນທີ່ຂັດກັບກົດ ໝາຍ ແລະ ວັດທະນະທຳອັນດີງາມ ຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາ ຜົນປະໂຫຽດ. |

| | | | |
|---|---|---|---|
| **ການເປັນໂສເພນີ (ມາດຕາ 131 ກົດໝາຍອາຍາ)** | - ແມ່ນການຂາຍປະເວນີຂອງຕົນເອງໃຫ້ຜູ້ອື່ນເສບສົມ.<br>- ມີອາຍຸ 18ປີຂຶ້ນໄປ.<br>- **ບໍ່ມີຜູ້ຖືກເຄາະຮ້າຍ.** | ການຂາຍປະເວນີແມ່ນເກີດຂຶ້ນບົນພື້ນຖານແນວຄວາມຄິດຂອງຜູ້ເປັນໂສເພນີເອງ.<br>**ມີຄວາມສະໝັກໃຈ** | ເພື່ອຈຸດປະສົງທາງດ້ານເສດຖະກິດການເງິນ.<br><br>**ບໍ່ມີການຂູດຮີດ** |
| **ການຄ້າໂສເພນີ (ມາດຕາ 132 ກົດໝາຍອາຍາ)** | -ການໃຫ້ສະຖານທີ່ພັກເຊົາ<br>-ການຕິດຕໍ່,ພົວພັນ , ຊອກຫາ, ແຕ່ບໍ່ໃຫ້ສະຖານທີ່ພັກເຊົາ.<br>-ການຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ ແລະ ອື່ນໆ<br>**ບໍ່ມີຜູ້ຖືກເຄາະຮ້າຍ** | ການອໍານວຍຄວາມສະດວກໃຫ້ແກ່ການບໍລິການທາງເພດ.<br>ການຫາລາຍໄດ້ດ້ວຍຮູບການເອົາຄົນມາຂາຍປະເວນີ.<br>**ມີຄວາມສະໝັກໃຈ** | - ເພື່ອຜົນປະໂຫຍດທາງດ້ານເສດຖະກິດ ດ້ວຍການຂາຍປະເວນີຂອງບຸກຄົນອື່ນ.<br>**ບໍ່ມີການຂູດຮີດ** |
| **ການເຜີຍແຜ່ສິ່ງລາມົກ (ມາດຕາ 138 ກົດໝາຍອາຍາ)** | ໄດ້ຜະລິດ ໜັງສື , ຮູບ ,ຟິມວິດີໂອ ແລະ ສິ່ງອື່ນໆທີ່<br>{ ລາມົກຂັດກັບວັດທະນະທໍາອັນດີງາມຂອງຊາດ<br>-ມີໄວ້ຄອບຄອງ | ຈໍາໜ່າຍ, ເຜີຍແຜ່ຜ່ານສື່ຕ່າງໆ | ເພື່ອຜົນປະໂຫຍດທາງດ້ານເສດຖະກິດ<br>ເພື່ອສ້າງຄວາມເຊື່ອມເສຍທາງດ້ານຊື່ສຽງ ,ກຽດສັກສີ ,ຄວາມອັບ ອາຍທາງເພດແກ່ບຸກ ຄົນອື່ນ.<br>**ບໍ່ມີການຂູດຮີດ** |

| | | | |
|---|---|---|---|
| **ການແຕ່ງດອງທີ່ຖືກຕ້ອງ (ມາດຕາ 6, 6/1 ແລະ ໝວດທີ 2 ກົດໝາຍຄອບຄົວ)** | - ມີອາຍຸ 18 ປີຂຶ້ນໄປ<br>- ມີຄວາມມັກຮັກ, ມີການຕົກ ລົງ ແລະ ຄວາມສະໝັກໃຈຂອງຄູ່ບ່າວສາວ. | ການໝັ້ນໝາຍ<br>ການສູ່ຂໍ<br>ການຈົດທະບຽນແຕ່ງດອງ.<br>ການແຕ່ງດອງ. | ເພື່ອສ້າງເປັນຄອບຄົວທີ່ຖືກຕ້ອງຕາມກົດໝາຍ ແນ່ໃສ່ຄຸ້ມຄອງ, ສ້າງສາ, ປົກປັກຮັກສາຄອບຄົວໃຫ້ມີຄວາມຜາສຸກ, ເປັນຈຸລັງທີ່ເຂັ້ມແຂງຂອງສັງຄົມ |
| **ການແຕ່ງດອງແອບແຝງ (ມາດຕາ 2 ການຄ້າມະນຸດ)** | **ບໍ່ມີຄວາມມັກຮັກ** | **ມີການຕົວະຍົວະຫຼອກລວງ** | **ເພື່ອຂູດຮີດ** |
| **ການເອົາເດັກມາເປັນລູກລ້ຽງ (ດໍາລັດ 194)** | - ລູກລ້ຽງຕ້ອງແມ່ນເດັກທີ່ບໍ່ທັນຮອດກະສຽນອາຍຸ 18 ປີ<br>- ພໍ່ລ້ຽງແມ່ລ້ຽງຕ້ອງແມ່ນບຸກ ຄົນມີອາຍຸ 18 ປີຂຶ້ນໄປໃນເວລາເຮັດຄໍາຮ້ອງຂໍເອົາເດັກໄປເປັນລູກລ້ຽງ ແລະ ມີອາຍຸຫ່າງກັບເດັກທີ່ຂໍໄປເປັນລູກລ້ຽງນັ້ນຢ່າງໜ້ອຍ ສິບແປດປີ;<br>- ພໍ່ລ້ຽງ ຫຼື ແມ່ ບໍ່ຖືກປົດສິດໃນການເປັນພໍ່ແມ່ ທັງມີເງື່ອນໄຂທາງດ້ານເສດຖະກິດ ທີ່ເໝາະສົມ. | - ຍື່ນຄໍາຮ້ອງຕໍ່ນາຍບ້ານບ່ອນເດັກອາໄສຢູ່ເພື່ອພິຈາລະນາພາຍໃນກໍານົດບໍ່ໃຫ້ເກີນໜຶ່ງເດືອນ, ຖ້າເຫັນຄວນຈຶ່ງອອກຂໍ້ຕົກລົງກ່ຽວກັບການເປັນລູກລ້ຽງແລ້ວສົ່ງໃຫ້ເຈົ້າໜ້າທີທະບຽນຄອບຄົວ | - ແນ່ໃສ່ຄຸ້ມຄອງປົກປັກຮັກສາສ້າງຄອບຄົວໃຫ້ມີຄວາມຜາສຸກໃຫ້ເປັນຈຸລັງການເຂັ້ມແຂງຂອງສັງຄົມ |

| | | | |
|---|---|---|---|
| | - ຕ້ອງໃຫ້ມີການເຫັນດີເຫັນພ້ອມເປັນລາຍລັກອັກສອນຂອງຜົວເມຍ ແລະ ພໍ່ແມ່ຂອງເດັກນັ້ນເສັຍກ່ອນ ເວັ້ນເສັຍແຕ່ພໍ່ ຫຼື ແມ່ ຂອງເດັກຫາກໄດ້ຖືກປົດຊິດໃນການເປັນພໍ່ ແມ່ ຫຼື ຮັບຮູ້ວ່າເປັນຜູ້ບໍ່ມີຄວາມສາມາດທາງດ້ານການປະພຶດ ຫຼື ເປັນຜູ້ຫາຍສາບສູນ.<br>ຖ້າວ່າເດັກນັ້ນຫາກຮອດອາຍຸ ສິບປີແລ້ວ ຕ້ອງໃຫ້ມີການເຫັນດີຂອງເດັກ ຕື່ມອີກ. | | |
| **ການຮ່ວມເພດກັບເດັກ (ມາດຕາ 89 ກົດໝາຍເດັກ)** | - ການຊອກຫາ.<br>- ການຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ.<br>- ເດັກຍິງຊາຍມີອາຍຸແຕ່ 12 ປີ 18 ປີ. | ການຕົວະຍົວະຫຼອກຫຼວງ.<br>ການຊື້ຈ້າງຈອບອວຍກ້ອຍການຈ່າຍຄ່າຕອບແທນ.<br>ການຕອບສະໜອງຜົນປະໂຫຍດ ດ້ວຍຮູບການໃດໜຶ່ງ. | ເພື່ອຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ |
| **ການທຳຊຳເລົາເດັກ (ມາດຕາ 129 ກົດໝາຍເດັກ)** | - ການຊອກຫາ<br>- ການມີເພດສຳພັນກັບເດັກຍິງ ຫຼື ເດັກຊາຍ<br>- ເດັກຍິງຊາຍມີອາຍຸແຕ່ 12 ປີ 15 ປີ. | ການມີເພດສຳພັນກັບເດັກຍິງ ຫຼື ເດັກຊາຍດ້ວຍຄວາມສະໝັກໃຈ. | ເພື່ອຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ |

## ການສົມທຽບລະຫວ່າງການຄ້າມະນຸດ ແລະ ການລັກລອບຄົນເຂົ້າອອກເມືອງຜິດກົດໝາຍ

| | ການຄ້າມະນຸດ (ຜູ້ໃຫຍ່) | ການຄ້າມະນຸດ (ເດັກ) | ການລັກລອບຄົນເຂົ້າອອກເມືອງຜິດກົດໝາຍ |
|---|---|---|---|
| ອາຍຸຜູ້ຖືກເຄາະຮ້າຍ | ສູງກວ່າ 18ປີ | ຕ່ຳກວ່າ 18ປີ | ບໍ່ຈຳແນກ |
| ການກະທຳ | ຕ້ອງມີການກະທຳໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງ | ຕ້ອງມີການກະທຳໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງ | ລັກລອບເອົາຄົນເຂົ້າອອກຜິດກົດໝາຍ |
| ວິທີການ | ຕ້ອງມີວິທີການໃດໜຶ່ງຕາມນິຍາມທີ່ລະບຸຂ້າງເທິງຖືກໃຊ້ | ບໍ່ຈຳເປັນ | ບໍ່ມີວິທີການ |
| ຈຸດປະສົງ | ເພື່ອຂູດຮີດ | ເພື່ອຂູດຮີດ | ບໍ່ມີການຂູດຮີດ |
| ຄວາມເຫັນດີເຫັນພ້ອມຂອງຜູ້ຖືກເຄາະຮ້າຍ | ບໍ່ຈຳເປັນ, ຖ້າວ່າມີວິທີການໃດໜຶ່ງຖືກນຳໃຊ້ | ບໍ່ຈຳເປັນ ແລະ ວິທີການບໍ່ຈຳເປັນວ່າຕ້ອງມີ | ຜູ້ຖືກລັກລອບເຂົ້າເມືອງເຫັນດີ ເຫັນພ້ອມນຳ |
| ລັກສະນະຂ້າມແດນ | ບໍ່ຈຳເປັນ | ບໍ່ຈຳເປັນ | ມີຄວາມຈຳເປັນ |

# ປະມວນກົດໝາຍອາຍາທີ່ກ່ຽວຂ້ອງກັບການຄ້າມະນຸດ

## ໝວດທີ 2
## ການກະທຳຜິດກ່ຽວກັບຄວາມປອດໄພ
## ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ

**ມາດຕາ 140 ການເປັນແພດເຖື່ອນ**

ບຸກຄົນໃດ ທີ່ບໍ່ໄດ້ຮັບອະນຸຍາດປິ່ນປົວຢ່າງຖືກຕ້ອງຕາມກົດໝາຍ ຫາກໄດ້ປິ່ນປົວຄົນເຈັບ ເພື່ອຫາລາຍໄດ້ ຈະຖືກປັບໃໝ່ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຄົນເສຍອົງຄະ ຫຼື ພິການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 50.000.000 ກີບ.

**ມາດຕາ 176 ການໃຊ້ແຮງງານໄວໜຸ່ມ**

ບຸກຄົນໃດ ຫາກໄດ້ຮັບເອົາເດັກ ອາຍຸແຕ່ ສິບສີ່ປີ ຫາ ຕໍ່າກວ່າ ສິບແປດປີ ເຂົ້າເຮັດວຽກ, ໃຫ້ເຮັດ ວຽກໜັກ ຫຼື ວຽກທີ່ເປັນອັນຕະລາຍ ຫຼື ວຽກຢູ່ສະຖານທີ່ ທີ່ເປັນອັນຕະລາຍ, ໃຫ້ເດັກເຮັດວຽກເກີນເວລາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ໃຊ້ເດັກ ໃນການສູ້ຮົບ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນບາດເຈັບສາຫັດ, ບາດເຈັບຫຼາຍຄົນ, ເສຍອົງຄະ ຫຼື ພິ ການ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າ ປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີການກະທຳຜິດ ຫາກພາໃຫ້ມີຄົນເສຍຊີວິດແຕ່ ສອງ ຄົນ ຂຶ້ນໄປ ຈະຖືກລົງໂທດຕັດອິດ ສະລະພາບ ແຕ່ ແປດປີ ຫາ ສິບຫ້າ ປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

## ໝວດທີ4

## ການກະທຳຜິດຕໍ່ສິດ ແລະ ເສລີພາບຂອງພົນລະເມືອງ

### ມາດຕາ 213 ການຂາຍຄົນ

ບຸກຄົນໃດຫາກ ໄດ້ຂາຍຄົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 70.000.000 ກີບ.

ໃນກໍລະນີມີການຂາຍ ແຕ່ ສອງຄົນຂຶ້ນໄປ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 50.000.000 ກີບ ຫາ 100.000.000 ກີບ.

ຜູ້ຊື້ກໍ່ຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

### ມາດຕາ 214 ການຂາຍ ຫຼື ລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ

ບຸກຄົນໃດຫາກ ໄດ້ຂາຍອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ບຸກຄົນໃດຫາກ ໄດ້ລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 70.000.000 ກີບ.

ບຸກຄົນໃດຫາກ ໄດ້ເອົາການຂາຍ ຫຼື ການລັກອະໄວຍະວະ ຫຼື ເນື້ອເຫຍື່ອ ຂອງຄົນ ເປັນອາຈິນ ຫຼື ມີການຈັດຕັ້ງເປັນກຸ່ມ ຫຼື ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍ ຈະຖືກລົງໂທດຕັດອິດສະລະພາບ ແຕ່ເຈັດປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 100.000.000 ກີບ.

ຜູ້ຊື້,ຜູ້ຂົນສົ່ງ ກໍ່ຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 215 ການຄ້າມະນຸດ**

ການຄ້າມະນຸດ ແມ່ນ ການຊອກຫາ,ລັກພາຕົວ,ການເຄື່ອນຍ້າຍ,ການຂົນສົ່ງ ຫຼື ນຳສົ່ງ,ຮັບເອົາຄົນຢູ່ພາຍໃນ ຫຼື ຕ່າງປະເທດ, ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ດ້ວຍການ ຂົນຂວາຍ,ແນະນຳ,ຕົວະຍົວະ ຫຼອກລວງ,ຊື້ຈ້າງ,ຈອບອອຍ,ຍຸຍົງ,ສວຍໃຊ້ອຳນາດ,ບັງຄັບ,ນາບຂູ່,ຜູກມັດດ້ວຍໜີ້ສິນ,ການເອົາເດັກໄປລ້ຽງ ຫຼື ເອົາເດັກເປັນລູກລ້ຽງແອບແຝງ, ໝັ້ນໝາຍແອບແຝງ,ແຕ່ງດອງແອບແຝງ,ການໃຫ້ຖືພາ,ຂໍທານ ແລະ ການຖ່າຍຮູບພາບ,ສະແດງ, ເຜີຍແຜ່ສິ່ງລາມົກ ຫຼື ດ້ວຍຮູບການອື່ນ ເພື່ອຂູດຮີດແຮງງານ,ຂູດຮີດທາງເພດ,ເປັນຂ້າທາດ,ຄ້າປະເວນີຂອງຜູ້ອື່ນ,ບັງຄັບໃຫ້ເປັນໂສເພນີ, ເອົາອະໄວຍະວະຕ່າງໆຂອງຮ່າງກາຍໄປຂາຍ ແລະ ສິ່ງອື່ນທີ່ຂັດກັບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ ຫຼື ຈຸດປະສົງອື່ນ ເພື່ອຫາຜົນປະໂຫຍດ.

ບຸກຄົນໃດ ຫາກໄດ້ກະທຳຜິດໃນສະຖານການຄ້າມະນຸດ ຈະຖືກລົງໂທດຕາມກໍລະນີດັ່ງນີ້:

1. ການຊອກຫາ,ລັກພາໂຕ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ;
2. ການເຄື່ອນຍ້າຍ,ການຂົນສົ່ງ ຫຼື ນຳສົ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບສອງປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 70.000.000 ກີບ;

3. ການຮັບເອົາຄົນ ຢູ່ພາຍໃນ ຫຼື ຕ່າງປະເທດ,ການໃຫ້ບ່ອນພັກເຊົາ ຫຼື ລີ້ຊ່ອນ ຈະຖືກລົງໂທດຕັດອິດສະລະພາບແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 50.000.000 ກີບ.

ສໍາລັບການກະທໍາຜິດຕໍ່ເດັກທີ່ມີອາຍຸຕໍ່າກວ່າ ສິບແປດປີ ພຽງແຕ່ ມີການກະທໍາ ແລະ ຈຸດປະສົງຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງ ຂອງ ມາດຕານີ້ ເຖິງວ່າຈະມີການຍິນຍອມ ຫຼື ຄວາມສະໝັກໃຈກໍຕາມ ຈະ ຖືກລົງໂທດຕັດອິດສະລະພາບແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກ ປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ.

ບຸກຄົນໃດຫາກ ກໍ່ການກະທໍາຜິດສະຖານການຄ້າປະເວນີ ເຖິງ ວ່າຜູ້ຖືກເຄາະຮ້າຍ ຈະມີການຍິນຍອມ ຫຼື ມີຄວາມສະໝັກໃຈ ແຕ່ຖ້າ ຫາກຖືກນໍາໃຊ້ເພື່ອຈຸດປະສົງໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ຖືວ່າການຄ້າມະນຸດ ແລະ ຈະຖືກລົງໂທດຕັດອິດສະລະ ພາບແຕ່ ຫ້າປີ ຫາ ຊາວປີ ແລະ ຈະປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ.

ໃນກໍລະນີການກະທໍາຜິດ ຫາກເປັນອາຈິນ, ມີການຈັດຕັ້ງເປັນ ກຸ່ມ, ຜູ້ຖືກເຄາະຮ້າຍເປັນເດັກ, ຜູ້ຖືກເຄາະຮ້າຍມີຈໍານວນແຕ່ ສອງຄົນ ຂຶ້ນໄປ,ເປັນຍາດໃກ້ຊິດຂອງຜູ້ກະທໍາຜິດ,ຜູ້ຖືກເຄາະຮ້າຍໄດ້ບາດເຈັບ ສາຫັດ,ເສຍອົງຄະ,ພິການ ຫຼື ເສຍຈິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບຫ້າປີ ຫາ ຊາວປີ ແລະ ຈະຖືກປັບໃໝ ແຕ່ 100.000.000 ກີບ ຫາ 500.000.000 ກີບ ແລະ ຈະຖືກຮິບຊັບ.

ໃນກໍລະນີການກະທໍາຜິດ ຫາກໄດ້ເຮັດໃຫ້ຜູ້ຖືກເຄາະຮ້າຍ ພິການ ຕະຫຼອດຊີວິດ, ຕິດເຊື້ອເຮສໄອວີ ຈະຖືກລົງໂທດຕັດອິດສະລະພາບ ຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 500.000.000 ກີບ ຫາ 1.000.000.000 ກີບ ແລະ ຈະຖືກຮິບຊັບ.

ການກະກຽມໃຫ້ແກ່ການກະທໍາຜິດ,ຄວາມພະຍາຍາມກໍ່ ການກະທໍາຜິດ ກໍຈະຖືກລົງໂທດ.

**ມາດຕາ 216 ການລັກພາຕົວ**

ບຸກຄົນໃດ ຫາກໄດ້ລັກຕົວຄົນໄປເພື່ອຮຽກຄ່າໄຖ່ ຫຼື ເພື່ອຈຸດປະສົງອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ເຈັດປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 100.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 217 ການຈັບຕົວ, ການກັກຕົວ ຫຼື ການກັກຂັງ ໂດຍບໍ່ຖືກຕ້ອງຕາມກົດໝາຍ**

ບຸກຄົນໃດ ຫາກຈັບຕົວ, ກັກຕົວ ຫຼື ກັກຂັງບຸກຄົນອື່ນ ໂດຍບໍ່ຖືກຕ້ອງຕາມກົດໝາຍ ຈະຖືກລົງ ໂທດຕຳນິວິຈານຕໍ່ໜ້າມະຫາຊົນ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 15.000.000 ກີບ.

ໃນກໍລະນີທີ່ການກະທຳຜິດມີການຈັດຕັ້ງເປັນກຸ່ມ, ມີການສວຍໃຊ້ໜ້າທີ່ຕຳແໜ່ງ, ກະທຳຜິດຫຼາຍ ກວ່າໜຶ່ງຄັ້ງ, ກະທຳຜິດຕໍ່ຫຼາຍກວ່າໜຶ່ງຄົນ ຫຼື ຕໍ່ບຸກຄົນທີ່ກຳລັງປະຕິບັດໜ້າທີ່ທາງການ ຈະຖືກລົງໂທດ ຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 218 ການບັງຄັບ**

ບຸກຄົນໃດ ຫາກໄດ້ບັງຄັບຜູ້ອື່ນ ດ້ວຍການໃຊ້ກຳລັງ ຫຼື ອາວຸດ ຫຼື ການນາບຂູ່ ເພື່ອໃຫ້ກະທຳ ຫຼື ບໍ່ໃຫ້ກະທຳສິ່ງໃດສິ່ງໜຶ່ງ ທີ່ຕົນຕ້ອງການ ຊຶ່ງເປັນການຂັດກັບຈຸດປະສົງຂອງຜູ້ຖືກບັງຄັບ ແລະ ກໍ່ຄວາມເສຍຫາຍແກ່ຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

**ມາດຕາ 224 ການຈໍາແນກເພດຍິງ**

ບຸກຄົນໃດ ຫາກໄດ້ຈໍາແນກ, ແບ່ງແຍກ, ກີດກັ້ນ, ຈໍາກັດ ແມ່ຍິງ ໃນການເຄື່ອນໄຫວທາງດ້ານ ການເມືອງ, ເສດຖະກິດ, ວິທະຍາສາດ, ວັດທະນະທໍາ, ສັງຄົມ ແລະ ຄອບຄົວ ເນື່ອງຈາກເຫດຜົນທາງເພດ ຈະຖືກຕໍານິວິຈານ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ຫຼື ລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 226 ການຈໍາແນກເດັກ**

ບຸກຄົນໃດ ຫາກໄດ້ຈໍາແນກ, ແບ່ງແຍກ, ກີດກັ້ນ, ກົດໜ່ວງ ຫຼື ຈໍາກັດ ບົນພື້ນຖານເຊື້ອຊາດ, ຜິວພັນ, ເພດ, ເຜົ່າ, ສາສະໜາ, ພາສາ, ການສຶກສາ, ຄວາມຮູ້ ຄວາມສາມາດ, ສະຕິປັນຍາ, ຖານະທາງດ້ານເສດຖະກິດສັງຄົມ, ສຸຂະພາບ, ຮູບຮ່າງ, ຄວາມພິການ, ຕົ້ນກໍາເນີດ ແລະ ດ້ານອື່ນຂອງເດັກ, ພໍ່ແມ່, ຜູ້ປົກ ຄອງ ຫຼື ສະມາຊິກອື່ນໃນຄອບຄົວຂອງເດັກ ຊຶ່ງເຮັດໃຫ້ເດັກບໍ່ໄດ້ຮັບສິດອັນຊອບທໍາຂອງຕົນ ຈະຖືກລົງ ໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 3.000.000 ກີບ.

## ໝວດທີ6

## ການກະທໍາຜິດຕໍ່ສາຍຜົວເມຍ,ຄອບຄົວ ແລະ ຮີດຄອງປະເພນີ

**ມາດຕາ 247 ການທໍາມິດສະຈານ**

ບຸກຄົນໃດ ທີ່ມີຜົວ ຫຼື ເມຍ ຫາກໄດ້ເສບສົມກັບຜູ້ອື່ນ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 10.000.000 ກີບ.

ຄູ່ທຳມິດສະຈານ ກໍຈະຖືກລົງໂທດໃນສະຖານດຽວກັນ.

ຄວາມພະຍາຍາມກໍການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 248 ການຂົ່ມຂືນທຳຊຳເລົາ**

ບຸກຄົນໃດ ຫາກໄດ້ໃຊ້ກຳລັງ, ໃຊ້ອາວຸດນາບຂູ່,ໃຊ້ຢາສະຫຼົບ, ໃຊ້ສິ່ງມຶນເມົາ ຫຼື ໃຊ້ວິທີອື່ນທີ່ເຮັດໃຫ້ຜູ້ອື່ນຕົກຢູ່ໃນສະພາບບໍ່ສາມາດຊ່ວຍເຫຼືອໂຕເອງໄດ້ ຫຼື ສວຍໂອກາດທຳເຊົາເລົາ ດ້ວຍການຂື່ນໃຈຂອງຜູ້ກ່ຽວ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສີ່ປີ ຫາ ຫົກປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 30.000.000 ກີບ.

ໃນກໍລະນີຜູ້ກະທຳຜິດ ຫາກໄດ້ຂົ່ມຂື່ນທຳຊຳເລົາຜູ້ຍິງທີ່ມີອາຍຸແຕ່ ສິບຫ້າປີ ຫາ ຕ່ຳກວ່າສິບແປດປີ ທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກປີ ຫາ ສິບປີ ແລະ ຈະຖືກປັບໃໝແຕ່ 7.000.000 ກີບ ຫາ 50.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ຂົ່ມຂືນທຳຊຳເລົາດ້ວຍວິທີປ່ຽນຜັນກັນ,ຂົ່ມຂືນທຳຊຳເລົາເດັກທີ່ມີອາຍຸຕ່ຳກວ່າ ສິບຫ້າປີ, ໄດ້ທຳຮ້າຍຮ່າງກາຍຜູ້ຍິງໃນເວລາຂົ່ມຂືນ ຫຼື ເຮັດໃຫ້ຜູ້ຍິງພິການຕະຫຼອດຊີວິດ ຫຼື ເສຍຊີວິດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝແຕ່ 10.000.000 ກີບ ຫາ 70.000.000 ກີບ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 249 ການຂົ່ມຂືນທຳຊຳເລົາແລ້ວຂ້າຖິ້ມ**

ບຸກຄົນໃດ ຫາກໄດ້ຂົ່ມຂືນທຳຊຳເລົາແລ້ວໄດ້ຂ້າຖິ້ມ ຈະຖືກລົງໂທດຕັດອິດສະລະພາບແຕ່ ສິບ ຫ້າປີ ຫາ ຊາວປີ ຫຼື ຕັດອິດສະລະພາບຕະຫຼອດຊີວິດ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 100.000.000 ກີບ ຫຼື ປະຫານຊີວິດ.

ຄວາມພະຍາຍາມກໍ່ການກະທຳຜິດ ກໍຈະຖືກລົງໂທດ.

**ມາດຕາ 250 ການທຳຊຳເລົາເດັກ**

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບແປດປີລົງມາ ຫາ ສິບຫ້າປີ ດ້ວຍການຕົວະຍົວະ,ຫຼອກລວງ,ຊວນເຊື່ອ,ຊື້ຈ້າງ,ຈອບອອຍ ຫຼື ຮູບການອື່ນ ເພື່ອໃຫ້ເດັກສົມຍອມ ແລະ ປະຕິບັດຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ໜຶ່ງປີ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບຫ້າປີ ຫາ ສິບສອງປີ ດ້ວຍການຈ່າຍຄ່າຕອບແທນ ຫຼື ຕອບສະໜອງຜົນປະໂຫຍດດ້ວຍຮູບການໃດໜຶ່ງ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 7.000.000 ກີບ.

ບຸກຄົນໃດ ຫາກໄດ້ຮ່ວມເພດກັບເດັກຍິງ ຫຼື ເດັກຊາຍ ທີ່ມີອາຍຸຕ່ຳກວ່າ ສິບສອງປີ ຈະດ້ວຍຮູບແບບໃດກໍ່ຕາມ ຖືວ່າເປັນການຂົ່ມຂືນທຳຊຳເລົາເດັກ ແລະ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສິບປີ ຫາ ສິບຫ້າປີ ແລະ ຈະຖືກປັບໃໝ ແຕ່ 7.000.000 ກີບ ຫາ 15.000.000 ກີບ.

ບຸກຄົນໃດ ທີ່ໄດ້ສະເໜີ,ຮັບເອົາ,ຈັດຫາ ຫຼື ສະໜອງເດັກ ທີ່ມີອາຍຸ ຕ່ຳກວ່າສິບແປດປີລົງມາໃຫ້ຂາຍປະເວນີ ຖືວ່າເປັນການກະທຳຜິດ ແລະ ຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 254 ຂອງປະມວນກົດໝາຍສະບັບນີ້.

**ມາດຕາ 253 ການບັງຄັບໃຫ້ເປັນໂສເພນີ**

ບຸກຄົນໃດ ຫາກໄດ້ບັງຄັບຜູ້ອື່ນໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫ້າປີ ຫາ ສິບປີ ແລະ ຈະຖືກປັບໃໝ ແຕ່ 20.000.000 ກີບ ຫາ 100.000.000 ກີບ.

ບຸກຄົນໃດ ຫາກໄດ້ບັງຄັບເດັກທີ່ມີອາຍຸຕ່ຳກວ່າສິບແປດປີ ໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະ ແຕ່ ສິບປີ ຫາ ຊາວປີ ແລະ ຈະຖືກປັບໃໝແຕ່ 30.000.000 ກີບ ຫາ 150.000.000 ກີບ.

**ມາດຕາ 254 ການຄ້າປະເວນີຂອງບຸກຄົນອື່ນ**

ບຸກຄົນໃດ ຫາກຫາລາຍໄດ້ ດ້ວຍການ ຄ້າປະເວນີຂອງບຸກຄົນອື່ນ ຈະໃນຮູບການໃດກໍຕາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 10.000.000 ກີບ ຫາ 20.000.000 ກີບ.

ໃນກໍລະນີຜູ້ກະທຳຜິດ ຫາກໄດ້ຖືເອົາການຄ້າປະເວນີຂອງບຸກຄົນອື່ນເປັນອາຈີນ ຫຼື ບັງຄັບບຸກຄົນທີ່ຢູ່ໃນຄວາມຄຸ້ມຄອງດູແລຂອງຕົນ ໃຫ້ເປັນໂສເພນີ ຈະຖືກລົງໂທດຕັດອິດສະລະພາບແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝແຕ່ 20.000.000 ກີບ ຫາ 100.000.000ກີບ.

**ມາດຕາ 260 ການຂາຍປະເວນີ**

ບຸກຄົນໃດ ຫາກໄດ້ຫາກິນ ດ້ວຍການຂາຍປະເວນີໃຫ້ຜູ້ອື່ນເສບສົມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 3.000.000 ກີບ.

**ມາດຕາ 262 ການທ່ອງທ່ຽວທາງເພດເດັກ**

ບຸກຄົນໃດ ຫາກໄດ້ເດີນທາງຈາກປະເທດໜຶ່ງ ໄປຍັງປະເທດອື່ນ ຫຼື ຈາກສະຖານທີ່ໃດໜຶ່ງ ໄປຍັງສະຖານທີ່ອື່ນ ເພື່ອລ່ວງລະເມີດທາງເພດເດັກ ດ້ວຍການສ້າງຄວາມຜູກພັນ, ສ້າງກິດຈະກຳໃດໜຶ່ງຮ່ວມກັບເດັກ ຫຼື ໃຊ້ວິທີການອື່ນ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 20.000.000 ກີບ.

ບຸກຄົນໃດ ຫາກໄດ້ຈັດຫາ, ໂຄສະນາ,ອຳນວຍຄວາມສະດວກໃຫ້ແກ່ຜູ້ເດີນທາງເພື່ອທ່ອງທ່ຽວທາງເພດເດັກ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 10.000.000 ກີບ.

**ມາດຕາ 263 ການທາລຸນແມ່ຍິງ ແລະ ເດັກ**

ບຸກຄົນໃດ ຫາກໄດ້ທາລຸນທາງດ້ານຮ່າງກາຍ ຫຼື ຈິດໃຈຂອງແມ່ຍິງ ດ້ວຍການເຕະ,ຕີ,ຜູກມັດ,ຂັງ,ໃຫ້ອົດອາຫານ,ບັງຄັບໃຫ້ອອກແຮງງານເກີນຂອບເຂດ,ນອກໃຈ,ລ່ວງລະເມີດທາງເພດຕໍ່ແມ່ຍິງ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ຫົກເດືອນ ຫາ ສາມປີ ແລະ ຈະຖືກປັບໃໝ ແຕ່ 3.000.000 ກີບ ຫາ 10.000.000 ກີບ.

ໃນກໍລະນີການກະທຳຜິດຕໍ່ເດັກ ຈະຖືກລົງໂທດຕັດອິດສະ ລະພາບ ແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະປັບໃໝ ແຕ່ 5.000.000 ກີບ ຫາ 15.000.000 ກີບ.

**ມາດຕາ 269 ການແຕ່ງດອງກັບເດັກ**

ບຸກຄົນໃດ ຫາກໄດ້ແຕ່ງງານກັບເດັກທີ່ມີອາຍຸ ຕໍ່າກວ່າ ສິບແປດປີ ລົງມາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະລະພາບ ແລະ ຈະຖືກປັບໃໝ ແຕ່ 2.000.000 ກີບ ຫາ 5.000.000 ກີບ.

ບຸກຄົນໃດ ຫາກໄດ້ອະນຸຍາດໃຫ້ເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ສິບແປດປີ ແຕ່ງດອງ ກໍຈະຖືກລົງໂທດໃນສະຖານດຽວກັນ.

**ມາດຕາ 270 ການປະຕິບັດທີ່ບໍ່ເໝາະສົມຕໍ່ຍາດໃກ້ຊິດ**

ບຸກຄົນໃດ ຫາກປະຕິບັດທີ່ບໍ່ເໝາະສົມ ຫຼື ຂົ່ມເຫັງ ປູ່, ຍ່າ, ພໍ່ເຖົ້າ, ແມ່ເຖົ້າ, ພໍ່, ແມ່, ຜົວ, ເມຍ, ລູກ, ຫຼານຂອງຕົນ ຫຼື ຜູ້ລ້ຽງດູຕົນເອງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ຕໍ່ກຽດສັກສີ, ຮີດຄອງປະເພນີອັນດີງາມ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ໜຶ່ງປີ ຫຼື ດັດສ້າງໂດຍບໍ່ຕັດອິດສະ ລະພາບ ແລະ ຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 5.000.000 ກີບ.